# ບົດເສັງຈົບມັດທາຍ ເຫຼັ້ມທີ 6

**1.** ຫຼັງຈາກຄືນພະຊົນ ພະເຢຊູປາກົດຕໍ່ໃຜກ່ອນ? (ມາລີອາໄທມັກດາລາ)

**2.** ເທື່ອທີສອງຕໍ່ໃຜ? (ພວກຜູ້ຍິງ)

**3.** ທ່າທີຂອງພວກສາວົກ ຫຼັງຈາກການຄືນພະຊົນເປັນຫຼັກຖານຢ່າງໃດທີ່ເຂົາເຫັນຮູ້ພະອົງ?
(ຖ້າເຂົາບໍ່ໄດ້ເຫັນຮູ້ແທ້ ເຂົາຈະບໍ່ມີໃຈກ້າເທດສະໜາ — ຄຳຄ້າຍຄືກັນກໍໄດ້)

**4-6.** ມີຜົນຮັບສຳຄັນ 3 ປະການໃດທີ່ມີມາຈາກການສະເດັດສູ່ສະຫວັນ?
(ຊົງໃຫ້ພະວິນຍານບໍລິສຸດມາ
ຊົງໄປຈັດແຈງບ່ອນໃນຟ້າສະຫວັນເພື່ອເຮົາ
ຊົງເປັນທະນາຍຄວາມອ້ອນວອນເພື່ອເຮົາຕໍ່ພະບິດາ)

**7.** ພະຄຳພີທຸກຕອນໄດ້ຮັບການຊົງ (ບັນດົນໃຈ) ຈາກພະເຈົ້າ. (ຕື່ມຄວາມທີ່ຂາດ)

**8-11.** ສິນບັບຕິສະມາ ສະແດງເຖິງເຫດການຈິງ 4 ປະການໃດ? (ການຍົກຜິດບາບ
ພະວິນຍານບໍລິສຸດ
ການເຂົ້າຕິດສະໜິດກັບພະອົງ
ການກະທຳຕອບຂອງເຮົາ)

**12.** ຈຸດໝາຍປາຍທາງຂອງການຕັດສິນໃນຄຼິດສະຕະຈັກຄືຫຍັງ?
(ໃຫ້ເພິ່ນຖິ້ມໃຈເກົ່າເອົາໃຈໃໝ່ ຫຼື ນຳກັບມາໃນທີ່ປະຊຸມ)

**13-18.** ໃຫ້ທ່ານຈົດຍຸກສະໄໝໃນພະຄຳພີເດີມ ແລະຊື່ຂອງຄົນສຳຄັນໃນແຕ່ລະຍຸກ.

| | | |
|---|---|---|
| ຍຸກ (ບັນພະບຸລຸດ) | ຄົນສຳຄັນ | (ອັບລາຮາມ ອີຊາກ ຢາໂຄບ ໂຢເຊັບ) |
| ຍຸກ (ອົບພະຍົບຈາກເອຢິບ) | ຄົນສຳຄັນ | (ໂມເຊ) |
| ຍຸກ (ຊາວຢິວຕັ້ງປະເທດ) | ຄົນສຳຄັນ | (ດາວິດ) |
| ຍຸກ (ອານາຈັກແບ່ງ) | ຄົນສຳຄັນ | (ເອຊາຢາ) |
| ຍຸກ (ການເນລະເທດ) | ຄົນສຳຄັນ | (ດານີເອນ) |
| ຍຸກ (ການກັບຄືນ) | | |

**19.** ໂຊໂລຜະເຊີນ ໜ້າກັບພະເຢຊູຢ່າງໃດ? (ມີການນິມິດຫຼັງຈາກພະເຢຊູຄືນພະຊົນ)

**20-23.** ໃຫ້ທ່ານຂຽນເຫດການ 4 ປະການທີ່ເລີ້ມຕົ້ນໃນຄຼິດສະຕະຈັກອັນຕີໂອເຂຍ.
(ການປ່າວປະກາດພະທຳໃຫ້ຄົນຕ່າງຊາດທົ່ວໄປ.
ທີ່ເຂົາເອີ້ນພວກລູກສິດວ່າເປັນຄຼິດສະຕຽນ.
ການບໍລິຈາກຕາມກຳລັງຝາກໄປຊ່ວຍຄຼິດສະຕະຈັກທີ່ອື່ນ.
ການຕັ້ງຄົນໄປປະກາດພະທຳທົ່ວໂລກ)

**24.** ພາກສ່ວນທີສອງໃນພະທຳກິດຈະການເລີ້ມກັບບົດໃດແລະຈົບລົງກັບບົດໃດ? (8-12)

**25.** ໃຫ້ທ່ານຂຽນໂອກາດ ໜຶ່ງທີ່ບາລະນາບາ ໜຸນໃຈຄົນທີ່ຮັບເຊື່ອໃໝ່. (ເອົາຂໍ້ ໜຶ່ງຈາກ
ສາມຂໍ້ຕໍ່ໄປ ຮັບຄົນຕ່າງຊາດເປັນພີ່ນ້ອງໜຸນໃຈໂຊໂລເປີດໂອກາດໃຫ້ໂຢຮັນມາລະໂກອີກ)